## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 21 ມິຖຸນາ 2020 (06-21-2020)

### ຄຳພະຍານຂອງຄວາມຫວັງພວກເຮົາ.

| |
|---|
| ເມື່ອໃດທີ່ທ່ານໄດ້ຊື້ສິ່ງໃດສິ່ງນຶ່ງ ອີງຕາມການແນະນຳຂອງເພື່ອນ? |

**ຈຸດສຳຄັນໃນບົດຮຽນ:** ຄວາມຫວັງຂອງພວກເຮົາໃນອົງພຣະຄຣິດຊີ້ໃຫ້ຄົນອື່ນໄປຫາພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

"ຖ້າພຣະເຈົ້າຊົງຮັກຂ້ອຍ ພຣະອົງບໍ່ຄວນຈະເຮັດໃຫ້ຂ້ອຍແບບນີ້."ຊາຣ໌ລອດ ແອວລຽດ ໄດ້ເວົ້າຄຳນີ້ຢູ່ເລື້ອຍໆ ເພາະສຸຂະພາບທີ່ບໍ່ດີຂອງນາງພາໃຫ້ນາງກາຍເປັນຄົນພິການ (ເສັງອົງຄະ). ໃນເມື່ອທ່ານ ດຣ. ຊີຊາ ເມແລນ, ອາຈານຊາວສວິສ, ໄດ້ໄປຢ້ຽມຢາມຄອບຄົວຂອງນາງໃນປີ ຄ.ສ. 1922, ເພິ່ນໄດ້ເວົ້າກັບນາງກ່ຽວກັບສະພາບການຂອງນາງ. ຄວາມຫ່ວງໃຍທີ່ແທ້ຈິງຂອງອາຈານຊີຊາ ທີ່ມີຕໍ່ນາງ, ບວກໃສ່ຄວາມເຊື່ອທີ່ໝັ້ນໃຈຂອງເພິ່ນ, ໄດ້ນຳໄປສູ່ການກ້າວໜ້າຫາຄຳຕອບ. ເພິ່ນບອກກັບນາງວ່າ: "*ການຮັກສາຄວາມທຸກທໍຣະມານຂອງນາງໃຫ້ຫາຍນັ້ນກໍ່ແມ່ນຄວາມເຊື່ອທີ່ນາງໄດ້ດູຖູກນັ້ນເອງ.*"ເພິ່ນໄດ້ບອກນາງວ່າ: "*ຈົ່ງມອບຕົວຂອງເຈົ້າໃຫ້ແດ່ພຣະເຈົ້າໃນຖານະປັດຈຸບັນ, ດ້ວຍການຕໍ່ສູ້ ແລະຄວາມຢ້ານກົວຂອງເຈົ້າ, ດ້ວຍຄວາມກຽດຊັງ ແລະຄວາມຮັກ, ດ້ວຍກຽດສັກສີ ແລະຄວາມອັບອາຍ*".

ນາງຊາຣ໌ລອດ ໄດ້ຫັນຫຼັງຈາກຊີວິດທີ່ນາງກຳລັງຜະເຊີນຢູ່ ແລ້ວກັບມາຫາພຣະເຈົ້າ ແລະໄດ້ມີປະສົບການຊີວິດໃຫມ່ໃນອົງພຣະຄຣິດນັບຕັ້ງແຕ່ວັນນັ້ນມາ. ໃນຂນະທີ່ນາງໄດ້ເຕີບໂຕໃນການດຳເນີນຊີວິດໄປກັບພຣະເຈົ້າ, ນາງໄດ້ສຶກສາພຣະຄຳຂອງພຣະເຈົ້າແລະເລີ້ມຕົ້ນຂຽນເພງນະມັສການທີ່ມີຊື່ສຽງທີ່ສຸດກ່ຽວກັບລາຍລະອຽດຂອງມື້ທີ່ສຳຄັນໃນຊີວິດຂອງນາງຄືເພງ: "ໃຈຊົ່ວເທົ່າໃດຂ້າໄດ້ເຊື່ອວ່າ" ("Just as I am") ຄວາມຫວັງຂອງ ອາຈານ ດຣ. ຊີຊາ ເມແລນ ໄດ້ຊີ້ແນວທາງໃຫ້ນາງ ຊາຣ໌ລອດ ແອວລຽດ ໄປຫາຄວາມຫວັງ, ແລະ ຄວາມຫວັງຂອງພວກເຮົາສາມາດຊີ້ຜູ້ອື່ນໃຫ້ໄປຫາອົງພຣະຄຣິດເຊັ່ນດຽວກັນ. ຊີວິດທີ່ດຳເນີນໄປໃນອົງພຣະຄຣິດແມ່ນ "**ຄຳແນະນຳ**" ອັນຍິ່ງໃຫຍ່ມະຫາສານສຳລັບຄົນອື່ນ ຊຶ່ງຈະນຳພາພວກເພິ່ນໃຫ້ມາຫາພຣະອົງ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

### 1. 1 ເປໂຕ2:4-6

*4 ຈົ່ງມາຫາພຣະອົງຜູ້ຊົງເປັນພຣະສີລາທີ່ຊົງຊີວິດຊຶ່ງຝ່າຍມະນຸດໄດ້ປະຖິ້ມເສັຽແຕ່ຝ່າຍພຣະເຈົ້າຊົງເລືອກໄວ້ແລະຊົງ*
*ຖືວ່າມີຄ່າ.5 ທ່ານທັງຫລາຍກໍເປັນເໝືອນຫີນທີ່ມີຊີວິດຢູ່ພວກທ່ານຈົ່ງຍອມໃຫ້ພຣະເຈົ້າຊົງກໍ່ຂຶ້ນເປັນພຣະວິຫານຝ່າຍ*
*ວິນຍານ, ເປັນປະໂຣຫິດບໍຣິສຸດເພື່ອຖວາຍເຄື່ອງບູຊາຝ່າຍວິນຍານຊຶ່ງຊອບພຣະທັຍຂອງພຣະເຈົ້າໂດຍທາງພຣະ-*
*ເຢຊູຄຣິດ. 6 ເພາະມີຄຳຂຽນໄວ້ໃນພຣະຄັມພີແລ້ວວ່າ,"ເບິ່ງແມ, ເຮົາວາງຫີນກ້ອນໜຶ່ງລົງໃນເມືອງຊີໂອນເປັນຫີນ*
*ເສົາເອກທີ່ເລືອກໄວ້ແລ້ວ ແລະເປັນຫີນທີ່ມີຄ່າອັນປະເສີດຜູ້ທີ່ວາງໃຈໃນຫີນນັ້ນກໍຈະບໍ່ໄດ້ຮັບຄວາມອັບອາຍຈັກເທື່ອ."*

ຄວາມລອດພົ້ນຂອງພວກເຮົາ, ແມ່ນປອດໄພພໍພຽງຄັ້ງດຽວ ແລະສຳລັບທຸກໆຄົນໃນອົງພຣະຄຣິດ, ດັ່ງນັ້ນຄຳເວົ້າຂອງເປໂຕໃນປະໂຍກ: "ໃນຂະນະທີ່ທ່ານມາຫາພຣະອົງ" (ຂໍ້ 4) ບໍ່ແມ່ນການອ້າງອີງເຖິງການຕັດສິນໃຈແຫ່ງຄວາມລອດພົ້ນເບື້ອງຕົ້ນ, ແຕ່ກົງກັນຂ້າມ, ເປັນຮູບພາບຂອງລູກ(ບຸດແລະທິດາ)ຂອງພຣະເຈົ້າທີ່ເຂົ້າມາໃກ້ພຣະອົງຕລອດເວລາ. ລະບົບການເສັຽສລະຢູ່ພາຍໃຕ້ພຣະຄັມພີເດີມ, ແມ່ນພຽງແຕ່ປະໂຣຫິດເທົ່ານັ້ນທີ່ມີສິດພິເສດເຂົ້າເຝົ້າພຣະເຈົ້າເພື່ອຖວາຍເຄື່ອງບູຊາ. ແຕ່ພາຍໃຕ້ພຣະສັນຍາໃໝ່, ພວກທີ່ເຊື່ອສາມາດເຂົ້າເຝົ້າອົງພຣະເຈົ້າໂດຍກົງ.

| ພວກເຮົາສາມາດດຳເນີນຊີວິດໂດຍປາສຈາກຄວາມອັບອາຍຂາຍໜ້າໃນວັທນະທັມປັດຈຸບັນນີ້ໄດ້ແນວໃດ? |
|---|

ບັນດາຜູ້ທີ່ເຊື່ອກໍ່ໄດ້ຖືກເສີມສ້າງຂຶ້ນໃນພຣະວິຫານແຫ່ງຈິດວິນຍານເໝືອນກັນ. ໃນສມັຍພຣະຄັມພີເດີມ, ພຣະວິຫານ ແລະໂດຍສະເພາະທີ່ບໍຣິສຸດແຫ່ງບໍຣິສຸດ (The Holy of Holies) ແມ່ນສະຖານທີ່ຊົງສະຖິດຂອງອົງພຣະເຈົ້າທ່າມກາງປະຊາກອນຂອງ ພຣະອົງ, ແຕ່ປັດຈຸບັນນີ້, ພວກເຮົາແມ່ນສະຖານທີ່ນັ້ນ!

- "ເຫດສັນນັ້ນທ່ານທັງຫຼາຍຈຶ່ງບໍ່ເປັນຄົນຕ່າງດ້າວທ້າວຕ່າງແດນອີກຕໍ່ໄປແຕ່ວ່າເປັນພົລເມືອງອັນດຽວກັນກັບພວກໄພ່ພົນແລະເປັນຄົວເຮືອນຂອງພຣະເຈົ້າ. ພວກທ່ານໄດ້ຖືກສ້າງຂຶ້ນເທິງຮາກຖານຊຶ່ງພວກອັຄສາວົກແລະພວກຜູ້ປະກາດພຣະທັມໄດ້ວາງລົງແລ້ວ, ອົງພຣະເຢຊູຄຣິດເອງຊົງເປັນຫີນເສົາເອກ. ໃນພຣະອົງນັ້ນທຸກສ່ວນຂອງໂຄງຮ່າງກໍຕິດຕໍ່ເຊື່ອມສນິດເຂົ້າກັນໂດຍດີແລະຈະເຣີນຂຶ້ນເປັນພຣະວິຫານອັນສັກສິດໃນອົງພຣະຜູ້ເປັນເຈົ້າ. ໃນພຣະອົງນັ້ນທ່ານທັງຫຼາຍກຳລັງຖືກກໍ່ຂຶ້ນໃຫ້ເປັນທີ່ສະຖິດຂອງພຣະເຈົ້າໂດຍພຣະວິນຍານໜືອນກັນ" (ອຟຊ 2:19-22).
- "ເພາະວ່າເຮົາທັງຫຼາຍເປັນຜູ້ຮ່ວມກັນທຳງານດ້ວຍກັນກັບພຣະເຈົ້າພວກເຈົ້າເປັນໄຮ່ນາຂອງພຣະເຈົ້າ" (1 ກຣທ 3:9). ປະຊາກອນຂອງພຣະເຈົ້າໄດ້ເອີ້ນຫາພຣະອົງໃນນາມພຣະສີລາແລະຄວາມລອດພົ້ນ. ດຽວນີ້ອົງພຣະຄຣິດໄດ້ຖືກຊົງກຳນົດເປັນພຣະສຸບຂອງພຣະສີລາເອກຂອງບ້ານແຫ່ງພຣະວິນຍານນີ້. ອົງພຣະເຢຊູຊົງເປັນພື້ນຖານຂອງຄຣິສຕະຈັກທີ່ຊົງປະທານຄວາມໝັ້ນຄົງ, ຄວາມປອດໄພ, ແລະ ຄວາມແຂງແກ່ງ ແກ່ຄຣິສຕະຈັກນັ້ນ. ດ້ວຍເຫດວ່າພື້ນຖານນັ້ນແຂງແກ່ງເໝືອນໝາກຫີນ, ບັນດາຜູ້ທີ່ເຊື່ອຈະບໍ່ເສັຽຄວາມຕັ້ງໃຈ ຫຼື ຖືກອັບອາຍຂາຍໜ້າຈັກເທື່ອ. ພວກເຮົາບໍ່ມີຄວາມເສັຽດາຍ ຫຼືສຳນຶກຜິດຫຼັງຈາກໄດ້ຕັດສິນໃຈຕິດຕາມອົງພຣະຄຣິດ.

## 2. <u>1 ເປໂຕ 2:7-10</u>

*[7]ຄ່າປະເສີດນັ້ນມີສຳລັບທ່ານທັງຫຼາຍທີ່ວາງໃຈເຊື່ອແຕ່ສຳລັບຄົນທັງຫລາຍທີ່ບໍ່ເຊື່ອນັ້ນ, "ຫີນທີ່ຊ່າງກໍ່ຖິ້ມເສັຽແລ້ວ. ຫີນນັ້ນແຫລະ, ໄດ້ກັບກາຍມາເປັນຫີນເສົາເອກ."[8]ແລະ, "ເປັນຫີນທີ່ເຮັດໃຫ້ຕຳສະດຸດແລະເປັນຫີນທີ່ເຮັດໃຫ້ສະດຸດລົ້ມ" ທີ່ເຂົາສະດຸດນັ້ນກໍເພາະເຂົາບໍ່ເຊື່ອຟັງພຣະທັມເຂົາກໍຖືກຊົງກຳນົດໄວ້ສຳລັບການນີ້ແຫລະ. [9]ແຕ່ຝ່າຍທ່ານທັງຫລາຍເປັນຊາດທີ່ພຣະເຈົ້າຊົງເລືອກໄວ້ແລ້ວ, ເປັນປະໂຣຫິດຫລວງ, ເປັນປະຊາຊາດບໍຣິສຸດ, ເປັນພົລເມືອງຂອງພຣະເຈົ້າເອງເພື່ອທ່ານທັງຫລາຍຈະໄດ້ປະກາດພຣະບາຣະມີຂອງພຣະອົງຜູ້ໄດ້ຊົງເອີ້ນພວກທ່ານໃຫ້ອອກມາຈາກຄວາມມືດເຂົ້າໄປສູ່ຄວາມສວ່າງອັນມະຫັສຈັນຂອງພຣະອົງ.[10]ຄືເມື່ອກ່ອນນັ້ນທ່ານທັງຫລາຍບໍ່ມີຊາດແຕ່ບັດນີ້ເປັນພົລເມືອງຂອງພຣະເຈົ້າເມື່ອກ່ອນພວກທ່ານບໍ່ໄດ້ຮັບພຣະກະຣຸນາແຕ່ບັດນີ້ພວກທ່ານໄດ້ຮັບພຣະກະຣຸນາແລ້ວ.*

ຮູບພາບທີ່ພຣະເຢຊູເອງໄດ້ຢືນຢູ່ບ່ອນໃດບ່ອນນຶ່ງ ໃກ້ບໍລິເວນພຣະສີລາ (ກ້ອນຫີນ) ນີ້ເມື່ອພຣະອົງໄດ້ອ້າງເຖິງ ເພງສັຣເສີນ 118: 22-23: "ພວກທ່ານຍັງບໍ່ໄດ້ອ່ານໃນພຣະຄັມພີຫຼືທີ່ວ່າ: ຫີນຊຶ່ງຊ່າງກໍ່ໄດ້ປະຕິເສດໄດ້ກັບເປັນຫີນເສົາເອກແລ້ວການນີ້ເປັນມາຈາກພຣະຜູ້ເປັນເຈົ້າເປັນການອັສຈັນປາກົດແກ່ຕາເຮົາ" (ມທ 21:42). ພຽງແຕ່ມື້ຕໍ່ມາພຣະເຢຊູຈະຖືກປະຊາຊົນຂອງພຣະອົງປະຕິເສດແລະຖືກຕັດສິນລົງໂທດໃຫ້ຕາຍໃນປ້ອມອັນໂຕເນັຽຊຶ່ງຢູ່ເທິງສິລານີ້ຄົນອື່ນອາດຈະປະຕິເສດພຣະຄຣິດ, ແຕ່ຜູ້ທີ່ເຊື່ອຖືໄດ້ຢືນຢູ່ຢ່າງໝັ້ນໃຈດ້ວຍເຫດວ່າພວກເຮົາແມ່ນ ໃຜໝາຍເຖິງພວກເຮົາເປັນຜູ້ທີ່ເຮົາເປັນໃນພຣະອົງ. ໃນຂໍ້ທີ່ 9, ເປໂຕ ໄດ້ໃຫ້ຄຳບັລຍາຍບາງຢ່າງກ່ຽວກັບປະຊາກອນຂອງພຣະເຈົ້າຊຶ່ງໄດ້ພົບປ້ອມກຳບັງ (ທີ່ລີ້ພັຍ) ໃນພຣະຄຣິດດັ່ງຕໍ່ລົງໄປນີ້:

- **ເຊື້ອຊາດທີ່ຊົງຖືກເລືອກໄວ້ແລ້ວ.** ພຣະເຈົ້າໄດ້ຊົງເລືອກຊາວອິສຣາເອນບໍ່ແມ່ນໂດຍອີງໃສ່ຂນາດ ຫຼື ຄຸນຄ່າຂອງພວກເຂົາເຈົ້າ, ແຕ່ແມ່ນດ້ວຍຄວາມຮັກອັນມະຫາສານຂອງພຣະອົງ. ພຣະອົງໄດ້ຊົງເລືອກເອົາພວກເຮົາເໝືອນກັນດ້ວຍພຣະມະຫາກະຣຸນາທີ່ຄຸນອັນຍິ່ງໃຫຍ່ມະຫາສານແລະຄວາມຮັກຂອງພຣະອົງ.
- **ປະໂຣຫິດຫລວງ.** ຄຳບັລຍາຍທີ່ຫາສິ່ງໃດປຽບບໍ່ໄດ້ນີ້ແມ່ນເປັນເອກະລັກສຳລັບຜູ້ທີ່ເຊື່ອ. ໃນພຣະສັນຍາເດີມ, ຊົນເຜົ່າຂອງເລວີແມ່ນເຊື້ອສາຍຂອງປະໂຣຫິດ, ແລະຊົນເຜົ່າຂອງຢູດາແມ່ນເຊື້ອສາຍຂອງກະສັດ, ແລະສອງເຊື້ອສາຍນີ້ບໍ່ໄດ້ເຄີຍຂ້າມກັນ(ບໍ່ກ້າວກ່າຍກັນ). ເຖິງຢ່າງໃດກໍ່ຕາມ, ພວກເຮົາຜູ້ທີ່ຢູ່ໃນພຣະຄຣິດແມ່ນມີເຊື້ອສາຍໃໝ່ທັງສິ້ນ: ພວກເຮົາແມ່ນປະຊາກອນຂອງພັນທະສັນຍາໃໝ່ທີ່ໄດ້ຮັບການຊົງໄຖ່ໂດຍພຣະໂລຫິດຂອງອົງພຣະຄຣິດ, ເຊິ່ງເປັນທັງພຣະມະຫາປະໂຣຫິດໃຫຍ່ຂອງພວກເຮົາແລະເປັນກະສັດຂອງກະສັດ.
- **ຊາດທີ່ບໍຣິສຸດ.** ດັ່ງທີ່ພວກເຮົາໄດ້ເຫັນມາແລ້ວໃນພາກຫຼັງຜ່ານມາ, ພວກເຮົາຖືກຮຽກເອີ້ນໃຫ້ເປັນຄວາມບໍຣິສຸດ ເພາະວ່າພຣະເຈົ້າຊົງເປັນອົງບໍຣິສຸດ.
- **ປະຊາກອນເພື່ອການຄອບຄອງຂອງພຣະອົງ.** ພວກເຮົາມີຄວາມສັມພັນສ່ວນຕົວກັບອົງພຣະຄຣິດ. ພວກເຮົາມີຄວາມສາມາດຮູ້ຈັກພຣະອົງ, ແລະພຣະອົງຊົງຮູ້ຈັກພວກເຮົາຢ່າງສົມບູນ(ໝົດທຸກຢ່າງ). ບໍ່ມີຜູ້ໃດສາມາດຕັດແຍກຄວາມສັມພັນ ຊຶ່ງພວກເຮົາແບ່ງປັນໃນນາມທີ່ພວກເຮົາເປັນປະຊາກອນຂອງພຣະອົງ.

| |
|---|
| ບັນດາຜູ້ຄົນທີ່ສະດຸດກ່ຽວກັບ ອົງພຣະເຢຊູ ຢ່າງໃດໃນປັດຈຸບັນນີ້? |

## 3.1 ເປໂຕ 2:11-15

*[11]ທ່ານທີ່ຮັກທັງຫລາຍເອີຍ, ຂ້າພະເຈົ້າຂໍເຕືອນສະຕິພວກທ່ານເໝືອນເປັນຄົນຕ່າງຊາດທີ່ທ່ອງທ່ຽວໃນໂລກນີ້ໃຫ້ງົດເວັ້ນຈາກຕັນຫາແນວມະນຸດຊຶ່ງທຳເສິກຕໍ່ສູ້ຈິດວິນຍານ.[12] ຈົ່ງດຳເນີນຊີວິດອັນດີຖ້າມກາງຄົນຕ່າງຊາດເພື່ອໃນກໍຣະນີທີ່ເຂົາຕິຕຽນນິນທາພວກທ່ານວ່າເປັນຄົນເຮັດຊົ່ວນັ້ນເຂົາກໍຈະສັຣເສີນພຣະເຈົ້າໃນວັນທີ່ພຣະອົງສະເດັດມາເພາະເຂົາໄດ້ແລເຫັນການດີທີ່ພວກທ່ານປະຕິບັດນັ້ນ.[13]ເພາະເຫັນແກ່ອົງພຣະຜູ້ເປັນເຈົ້າທ່ານທັງຫລາຍຈົ່ງຍອມຢູ່ໃຕ້ຂໍ້ບັງຄັບທີ່ມະນຸດຕັ້ງໄວ້ທຸກຢ່າງບໍ່ວ່າຜູ້ນັ້ນຈະເປັນມະຫາກະສັດຜູ້ສູງສຸດ.[14]ຫລືຈະເປັນຜູ້ປົກຄອງທີ່ໄດ້ຮັບສັ່ງຈາກພຣະມະຫາກະສັດນັ້ນໃຫ້ລົງໂທດຜູ້ທີ່ເຮັດຊົ່ວແລະຍົກຍ້ອງຜູ້ທີ່ເຮັດດີ.[15]ເພາະນ້ຳພຣະທັຍຂອງພຣະເຈົ້າເປັນດັ່ງນີ້-ແຫລະ, ຄືດ້ວຍເຮັດການດີດັ່ງນັ້ນພວກທ່ານຈະໄດ້ລະງັບຄວາມໂງ່ຂອງຄົນທີ່ບໍ່ມີສະຕິໃຫ້ມິດເສັຽ.*

*ການປະຕິບັດຕ້ອງໄປຕາມຄຳເວົ້າ* (ເຮັດຈັ່ງເວົ້າແລະເວົ້າສິ່ງທີ່ເຮັດ). ຄຳເວົ້າຄຳນີ້ກ່ຽວຂ້ອງກັບພຶດຕິກັມ (ການກະທຳ) ຂອງພວກເຮົາຢູ່ໃນໂລກທີ່ສະພາບແວດລ້ອມອາດຈະບໍ່ສະດວກສະບາຍສຳລັບຊາວຄຣິສຕຽນທັງຫຼາຍ. ຖ້າພວກເຮົາອ້າງວ່າພວກເຮົາເປັນຜູ້ຕິດຕາມອົງພຣະຄຣິດ, ແລ້ວພວກເຮົາຕ້ອງດຳເນີນຊີວິດຂອງພຣະອົງຕໍ່ໜ້າໂລກນີ້ (ຄືເປັນຕົວຢ່າງແກ່ຊາວໂລກ). ຊາວຄຣິດສະຕຽນຄວນຈະເປັນເພື່ອນບ້ານ, ພົລເມືອງ, ຜູ້ຈັດການ, ພະນັກງານ,

ໝູ່ເພື່ອນ, ແລະເພື່ອນຮ່ວມງານ**<u>ທີ່ດີທີ່ສຸດ</u>**. ພວກເຮົາຕ້ອງເປັນຕົວແທນຂອງພຣະຄຣິດໃນທຸກສິ່ງທີ່ພວກເຮົາເຮັດ: ນັບແຕ່ການຈ່າຍໃບບິລ, ຫຼີ້ນກິລາ, ຈົນເຖິງການລ້ຽງດູລູກຂອງພວກເຮົາ. ເປໂຕໄດ້ຍົກໃຫ້ເຫັນ 3 ວິທີທີ່ພວກເຮົາສາມາດເປັນຕົວຢ່າງຂອງ(ໃຫ້ແກ່)ພຣະຄຣິດດັ່ງຕໍ່ລົງໄປນີ້:

**ຫລີກລ້ຽງຈາກຄວາມປາຖນາທີ່ຜິດບາບ.** ພວກເຮົາຕ້ອງຮັບຜິດຊອບສ່ວນຕົວຕໍ່ການກະທຳຂອງຕົນເອງ, ເພາະສະນັ້ນ, ພວກເຮົາຄວນນຳຕົວເອງອອກຈາກອິດທິພົນແລະຈາກສະຖານະການບາງຢ່າງ. ວຽກງານທີ່ດີແລະການດຳລົງຊີວິດທີ່ຊອບທັມຂອງພວກເຮົາຈະເປັນການຮັບໃຊ້ເພື່ອຊີ້ນຳຄົນອື່ນໄປຫາ**ພຣະອົງ**ຜູ້ທີ່ໄດ້ຊົງຊ່ວຍພວກເຮົາໃຫ້ລອດພົ້ນ (ຄືອົງພຣະຄຣິດ).

1. **ຍອມຈຳນົນ(ຢູ່ໃຕ້)ຕໍ່ອຳນາດການປົກຄອງ.** ເປໂຕບໍ່ໄດ້ປະຕິເສດໃນຄຳແນະນຳຂອງເພິ່ນກ່ຽວກັບການຍອມຢູ່ພາຍໃຕ້ສິດອຳນາດຂອງມະນຸດ. ເຖິງຢ່າງໃດກໍ່ຕາມ, ຜູ້ທີ່ເຊື່ອຫຼາຍຄົນທີ່ລາວຂຽນຈົດໝາຍຫາ ກຳລັງປະເຊີນໜ້າກັບການກົດຂີ່ຂົ່ມເຫັງຢ່າງໜັກ ຢູ່ໃນກຳມືຂອງຜູ້ມີອຳນາດ. ຣະບົບຂອງລັຖບານອາດຈະມີການສໍ້ລາດບັງຫຼວງ, ແຕ່ພຣະເຈົ້າໄດ້ຊົງແຕ່ງຕັ້ງສະຖາບັນຂອງລັຖບານເອງນັ້ນຂຶ້ນ ກໍ່ເພື່ອຄວາມຢູ່ເຢັນເປັນສຸກຂອງພົລເມືອງຂອງປະເທດນັ້ນ.
2. **ທຳ(ປະຕິບັດ)ໃນສິ່ງທີ່ດີ.** ບັນດາຄົນມັກຖາມຢູ່ເລື້ອຍໆວ່າ ພຣະປະສົງຂອງອົງພຣະເຈົ້າສຳລັບຊີວິດຂອງພວກເພິ່ນແມ່ນຫຍັງ? ແຕ່ມັນບອກຢ່າງແຈ່ມແຈ້ງ (ຢ່າງຂາວດຳ) ໃນທີ່ນີ້ຄື: **<u>ທຳໃນສິ່ງທີ່ດີ</u>.**

| |
|---|
| ພຣະຄຳຊ່ວງນີ້ສອນໃຫ້ພວກເຮົາກ່ຽວກັບ <u>ການຕິດຕາມອົງພຣະຄຣິດດ້ວຍກັນ</u> ໂດຍວິທີໃດ? |

## ນຳໃຊ້ໃນຊີວິດ:

ທ່ານຈະດຳເນີນຊີວິດແຫ່ງຄວາມຫວັງຂອງທ່ານຢ່າງໃດ ພາຍໃຕ້ສາຍຕາຂອງຊາວໂລກທີ່ຈ້ອງມອງທ່ານຢູ່? ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງຖວາຍພຣະກຽດ.** ຈົ່ງເລີ້ມຕົ້ນຊີວິດແຕ່ລະວັນດ້ວຍການທູນຖາມພຣະເຈົ້າໃນວິຖີທາງທີ່ທ່ານສາມາດຖວາຍພຣະກຽດແດ່ພຣະອົງໃນຂນະທີ່ທ່ານດຳເນີນຊີວິດໃນວັນນັ້ນ ບໍ່ວ່າວຽກງານຈະງ່າຍຫຼືຍາກປານໃດກໍຕາມ. ບາດກ້າວນ້ອຍໆໃນການເຊື່ອຟັງຈະນຳໄປສູ່ເສັ້ນທາງອັນຍືດຍາວສູ່ຄວາມເປັນພຣະເຈົ້າ(ຊອບທັມ).
- **ຈົ່ງຍອມຈຳນົນ.** ມີບຸກຄົນຫລືອົງການອຳນາດການປົກຄອງ ທີ່ທ່ານຍັງບໍ່ໄດ້ຍອມຈຳນົນຕໍ່ ເໝືອນດັ່ງທີ່ທ່ານໄດ້ຍອມຈຳນົນຕໍ່ພຣະຜູ້ເປັນເຈົ້າດ້ວຍຄວາມຮັກບໍ່? ສາຣະພາບເຣື່ອງນີ້ຕໍ່ອົງພຣະຜູ້ເປັນເຈົ້າແລະພະຍາຍາມເຮັດໃຫ້ມັນຖືກຕ້ອງກັບຄົນນັ້ນໄວເທົ່າທີ່ຈະໄວໄດ້.
- **ຈົ່ງເວົ້າຢ່າງເປີດເຜີຍ.** ຜູ້ໃດຜູ້ນຶ່ງໃນວົງການອິດທິພົນຂອງທ່ານຈຳເປັນຕ້ອງຮູ້ຄວາມຫວັງຂອງທ່ານໃນພຣະຄຣິດ. ຄິດເຖິງສິ່ງດີໆທີ່ເຫັນໄດ້ຊັດເຈນທີ່ທ່ານສາມາດເຮັດໄດ້ສຳລັບບາງຄົນທີ່ອາດຈະໂງ່, ບໍ່ຫົວຊາ, ຫຼືວິພາກວິຈານຕໍ່ຂ່າວປະເສີດ. ສະແດງຄວາມຮັກຂອງອົງພຣະຄຣິດຕໍ່ພວກເຂົາໂດຍບໍ່ມີຂໍ້ຜູກມັດໃດໆ!

ພວກເຮົາໝົດທຸກຄົນອາດຈະບໍ່ໄດ້ຂຽນເພງນະມັສການທີ່ເປັນເຫດໃຫ້ຄົນອື່ນຖວາຍພຣະກຽດແດ່ພຣະເຈົ້າ. ແຕ່ຊີວິດທີ່ດຳເນີນໄປໃນພຣະຄຣິດຈະເປັນການສະແດງອອກເຖິງການໜຸນນ້ຳໃຈແກ່ຄົນອື່ນໃຫ້ມາຫາພຣະອົງ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນhttp://lsbf.us ໂດຍSSK**